# ການຊອກຫາຂໍ້ມູນທີ່ເຊື່ອຖືໄດ້ກ່ຽວກັບປະເດັນສີຂຽວ



# ການຄົ້ນຫາຂໍ້ມູນທີ່ເຊື່ອຖືໄດ້

ຫາກວ່າຕ້ອງການຊອກຫາຂໍ້ມູນທີ່ເຊື່ອຖືໄດ້ກ່ຽວກັບສະພາບດິນຟ້າອາກາດ ແລະ ສິ່ງແວດລ້ອມ ໃຫ້ກວດສອບວ່າແຫຼ່ງຂໍ້ມູນນັ້ນແມ່ນເປັນຂໍ້ມູນທີ່ເປັນຜູ້ຊ່ຽວຊານ ເຊັ່ນ: ພາກສ່ວນອຸຕຸນິຍົມວິທະຍາ ຫຼື ນັກວິທະຍາສາດກ່ຽວກັບສິ່ງແວດລ້ອມ ຫຼື ມາຈາກອົງການໃດໜຶ່ງທີ່ໜ້າເຊື່ອຖື ເຊັ່ນ: ຄະນະກຳມະການສະເພາະກິດລະຫວ່າງລັດຖະບານ ເລື່ອງການປ່ຽນແປງຂອງພູມອາກາດ ຫຼື IPCC

ນຳໃຊ້ການຄົ້ນຄວ້າວິໄຈທາງວິທະຍາສາດ ແລະ ອົງການທີ່ມີຊື່ສຽງ ເຊັ່ນ: BCC, Reuters ຫຼື ໂຄງການສິ່ງແວດລ້ອມແຫ່ງສະຫະປະຊາຊາດ, ອົງການເຫຼົ່ານີ້ສາມາດປະຕິບັດຕາມລະບຽບການກວດສອບຂໍ້ມູນຄວາມຈິງ ແລະ ຈັນຍາທຳຂອງສື່ມວນຊົນຢ່າງເຄັ່ງຄັດ

ຄວນປຽບທຽບຂໍ້ມູນທີ່ໜ້າເຊື່ອຖືຈາກຫຼາຍໆແຫ່ງສະເໜີ ເພື່ອໃຫ້ແນ່ໃຈວ່າຂໍ້ມູນນັ້ນ ຖືກຕ້ອງ!

ໃຫ້ລະວັງການລຳອຽງ, ການສຶກສາວິໄຈຫຼາຍບ່ອນທີ່ໄດ້ຮັບທຶນການສະໜັບສະໜູນຈາກບັນດາບໍລິສັດອາດຈະບໍ່ເປັນກາງເທົ່າກັບການວິໄຈອິດສະຫຼະຈາກມະຫາວິທະຍາໄລ ຫຼື ກຸ່ມສິ່ງແວດລ້ອມ



# ອົງການທີ່ເຮັດວຽກກ່ຽວກັບບັນຫາສິ່ງແວດລ້ອມສີຂຽວ



ໃນໜ້າຖັດໄປນີ້ຈະສະແດງໃຫ້ເຫັນລາຍຊື່ອົງການຕ່າງໆ ທີ່ມີຂໍ້ມູນດີໆກ່ຽວກັບການປ່ຽນແປງສະພາບດິນຟ້າອາກາດ ແລະ ສິ່ງແວດລ້ອມ ຜົນງານຂອງອົງການເຫຼົ່ານີ້ມີພື້ນຖານມາຈາກວິທະຍາສາດ ແລະ ຂໍ້ມູນຄວາມຈິງ ຫາກທ່ານຕ້ອງການຮູ້ກ່ຽວກັບຫົວຂໍ້ສະພາບອາກາດ ແລະ ສິ່ງແວດລ້ອມ ສາມາດ ກົດໃສ່ທີ່ຊື່ອົງການ ຫຼື ເວັບໄຊ ຂອງອົງການເຫຼົ່ານີ້ໄດ້.

# ອົງການຈັດຕັ້ງສາກົນ



- ໂຄງການສິ່ງແວດລ້ອມແຫ່ງສະຫະປະຊາຊາ (UNEP)
- ກອງທຶນຮັກສາສິ່ງແວດລ້ອມ
- ກອງທຶນສັດປ່າໂລກ WWF
- ອົງການເຝົ້າລະວັງປ່າໄມ້ທົ່ວໂລກ

# ອົງການຈັດຕັ້ງໃນ ສປປ ລາວ



- ສະມາຄົມຊີວະນາໆພັນລາວ (LBA)
- ກອງທຶນສັດປ່າໂລກ ປະຈຳ ສປປ ລາວ (WWF) Laos
- ອົງການອະນຸລັກສັດປ່າປະຈຳ ສປປ ລາວ WCS Lao PDR
- RECOFTC ລາວ

# ອົງການຈັດຕັ້ງໃນ ສປປ ລາວ

- ສະມາຄົມພັດທະນາຊຸມຊົນສີຂຽວ GCDA
- VFI ລາວ
- ມູນນິທິ ອະນຸລັກ ສັດປ່າ ລາວ